**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ແຂວງ ຈຳປາສັກ

ພະແນກວັດທະນະທຳ ແລະ ການທ່ອງທ່ຽວ ເລກທີ...34.../ວທຂ.ຈສ

ແຂວງຈຳປາສັກ, ວັນທີ 15 ພຶດສະພາ 2026

## ແຈ້ງການເຊື້ອເຊີນປະມູນ

**ເຖິງ:** ບໍລິສັດຮັບເໝົາກໍ່ສ້າງ ທີ່ມີໃບອະນຸຍາດ ແລະ ທະບຽນວິສາຫະກິດຖືກຕ້ອງຕາມກົດໝາຍ.

**ເລື່ອງ:** ເຊີນເຂົ້າຮ່ວມປະມູນ ໂຄງການກໍ່ສ້າງ, ປັບປຸງ, ສ້ອມແປງ ຫໍພິພິທະພັນ ແລະ ຫໍສະໝຸດ ແຂວງຈຳປາສັກ ໄລຍະ II.

- ອີງຕາມ ບົດບັນທຶກຊ່ວຍຈຳການຮ່ວມມື ລະຫວ່າງ ຄະນະກຳມະການປົກຄອງ ແຂວງຈຳປາສັກ ແຫ່ງ ສປປ ລາວ ແລະ ຄະນະກຳມະການປົກຄອງປະຊາຊົນແຂວງ ຢາລາຍ ແຫ່ງ ສສ ຫວຽດນາມ, ຄັ້ງວັນທີ 29 ມີນາ 2026;
- ອີງຕາມ ຂໍ້ຕົກລົງຂອງປະທານຄະນະກຳມະການປົກຄອງແຂວງຈຳປາສັກ, ສະບັບເລກທີ 339/ຄປຂ.ຈສ, ລົງວັນທີ 4 ພຶດສະພາ 2026 ວ່າດ້ວຍການແຕ່ງຕັ້ງຄະນະກາມະການຮັບຜິດຊອບຈັດຊື້-ຈັດຈ້າງ ແລະ ຄຸ້ມຄອງໂຄງການກໍ່ສ້າງ ປັບປຸງ, ສ້ອມແປງ ຫໍພິພິທະພັນ ແລະ ຫໍສະໝຸດ ແຂວງຈຳປາສັກ ໄລຍະ II.

ພະແນກວັດທະນະທຳ ແລະ ການທ່ອງທ່ຽວແຂວງ ຈຳປາສັກ ຂໍຖືເປັນກຽດແຈ້ງການມາຍັງທ່ານອຳນວຍການ/ປະທານ ບໍລິສັດກໍ່ສ້າງ ຊາບທົ່ວເຖິງກັນວ່າ: ພວກເຮົາໄດ້ຮັບທຶນຊ່ວຍເຫຼືອລ້າຈາກ ຄະນະກຳມະການປົກຄອງປະຊາຊົນແຂວງ ຢາລາຍ ແຫ່ງ ສສ ຫວຽດນາມ ໃນກໍ່ສ້າງ ປັບປຸງ, ສ້ອມແປງ ຫໍພິພິທະພັນ ແລະ ຫໍສະໝຸດ ແຂວງຈຳປາສັກ ໄລຍະ II, ຖ້າບໍລິສັດໃດມີຄວາມສົນໃຈຂໍເຊີນເຂົ້າຮ່ວມການປະມູນໂຄງການດັ່ງກ່າວ ແມ່ນໃຫ້ມາພົວພັນຊື້ຊອງເອກະສານປະມູນຢູ່ຫ້ອງການ ພະແນກວັດທະນະທຳ ແລະ ການທ່ອງທ່ຽວແຂວງຈຳປາສັກ (ຫ້ອງການບໍລິຫານ ຊັ້ນ 2) ໃນໂມງລັດຖະການ, ເລີ່ມແຕ່ວັນທີ 15 ພຶດສະພາ 2026, ການເປີດຮັບຊອງປະມູນໂດຍຊ້ອງໜ້າຈະຈັດຂຶ້ນໃນຕອນບ່າຍ ຂອງວັນທີ 15 ມິຖຸນາ 2026, ໃນເວລາ 13:30 ໂມງ; ທີ່ຫ້ອງປະຊຸມຂອງພະແນກ ວັດທະນະທຳ ແລະ ການທ່ອງທ່ຽວແຂວງຈຳປາສັກ. ລາຄາຊອງປະມູນລະ 2,000,000 ກີບ/ຊອງ (ສອງລ້ານກີບຕໍ່ຊອງ).

ດັ່ງນັ້ນ, ຈຶ່ງຂໍແຈ້ງມາຍັງ ບັນດາທ່ານບໍລິສັດຮັບເໝົາກໍ່ສ້າງ ເພື່ອຮັບຊາບຢ່າງທົ່ວເຖິງ.

**ຫົວໜ້າພະແນກ**

ພະແນກ ວັດທະນະທຳ ແລະ ການທ່ອງທ່ຽວ ແຂວງຈຳປາສັກ

**ນ. ເດືອນ ແກ້ວພິລາວັນ**